**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 1510/ອຄ.ກອຫ

ນະຄອນຫຼວງວຽງຈັນ, ວັນທີ 30 ຕຸລາ 2019

# ຂໍ້ຕົກລົງ
# ວ່າດ້ວຍນິຄົມອຸດສາຫະກຳ

- ອີງຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013.
- ອີງຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016.
- ອີງຕາມດຳລັດນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017.
- ອີງຕາມການສະເໜີຂອງກົມອຸດສາຫະກຳ ແລະ ຫັດຖະກຳ ສະບັບເລກທີ 1225/ກອຫ.ສຂອ, ລົງວັນທີ 09 ກັນຍາ 2019.

**ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ສ້າງຂຶ້ນເພື່ອກຳນົດ ຫຼັກການ, ມາດຕະການ ແລະ ລະບຽບການ ກ່ຽວກັບການສ້າງຕັ້ງ ແລະ ການຄຸ້ມຄອງນິຄົມອຸດສາຫະກຳ ເພື່ອສົ່ງເສີມການລົງທຶນທັງພາຍໃນ ແລະ ຕ່າງປະເທດ ໃນການສ້າງຕັ້ງ ແລະ ພັດທະນານິຄົມອຸດສາຫະກຳ ພ້ອມດ້ວຍການລົງທຶນກິດຈະການໂຮງງານຕ່າງໆ ຢູ່ໃນນິຄົມອຸດສາຫະກຳ ໂດຍເຂັ້ມງວດໃນການປົກປັກຮັກສາສິ່ງແວດລ້ອມ ແລະ ສອດຄ່ອງຕາມນະໂຍບາຍການພັດທະນາໄປຕາມທິດສີຂຽວ ແນໃສ່ສົ່ງເສີມການຜະລິດສະໜອງແກ່ການຊົມໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ, ສ້າງລາຍຮັບໃຫ້ແກ່ງົບປະມານແຫ່ງຊາດ ປະກອບສ່ວນພັດທະນາເສດຖະກິດ-ສັງຄົມໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ຍືນຍົງ.

**ມາດຕາ 2 ນິຄົມອຸດສາຫະກຳ**

ນິຄົມອຸດສາຫະກຳ ແມ່ນເນື້ອທີ່ດິນທີ່ໄດ້ພັດທະນາລະບົບພື້ນຖານໂຄງລ່າງຄົບຊຸດ ເຊັ່ນ ຖະໜົນ, ລະບົບລະບາຍນ້ຳ, ລະບົບບຳບັດສິ່ງເສດເຫຼືອ, ລະບົບປ້ອງກັນນ້ຳຖ້ວມ, ໄຟຟ້າ, ນ້ຳປະປາ, ໂທລະຄົມມະນາຄົມ, ອາຄານ, ທີ່ຢູ່ອາໄສ, ສາງ ແລະ ສິ່ງອຳນວຍຄວາມສະດວກອື່ນທີ່ຈຳເປັນ ເພື່ອຮັບໃຊ້ແກ່ການດຳເນີນກິດຈະການໂຮງງານອຸດສາຫະກຳ. ນິຄົມອຸດສາຫະກຳ ສ້າງຂຶ້ນຢູ່ໃນ ຫຼື ນອກເຂດອຸດສາຫະກຳ ກໍໄດ້.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບຕ່າງໆ ທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ເຂດອຸດສາຫະກຳ** ໝາຍເຖິງ ເນື້ອທີ່ດິນທີ່ໄດ້ສະຫງວນ ຫຼື ຈັດສັນໄວ້ ສຳລັບການສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງ ຫຼື ກິດຈະການອື່ນ ທີ່ຮັບໃຊ້ໃຫ້ແກ່ການດຳເນີນກິດຈະການອຸດສາຫະກຳທີ່ໄດ້ຮັບການຮັບຮອງຢ່າງເປັນທາງການຈາກລັດຖະບານ.
2. **ນິຄົມອຸດສາຫະກຳທົ່ວໄປ** ໝາຍເຖິງ ນິຄົມອຸດສາຫະກຳປຸງແຕ່ງ ທີ່ດຳເນີນການຜະລິດເພື່ອຈຳໜ່າຍຢູ່ພາຍໃນ ແລະ ສົ່ງອອກ.
3. **ນິຄົມອຸດສາຫະກຳປຸງແຕ່ງເພື່ອການສົ່ງອອກ** ໝາຍເຖິງ ນິຄົມອຸດສາຫະກຳທີ່ດຳເນີນການຜະລິດເພື່ອການສົ່ງອອກສະເພາະ ຫຼືເອີ້ນວ່າ ເຂດອຸດສາຫະກຳປຸງແຕ່ງເພື່ອການສົ່ງອອກ ຕາມທີ່ໄດ້ກຳນົດຢູ່ໃນມາດຕາ 30 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ.
4. **ຜູ້ພັດທະນາ** ໝາຍເຖິງ ຜູ້ລົງທຶນພັດທະນາພື້ນຖານໂຄງລ່າງໃນເນື້ອທີ່ ທີ່ກຳນົດເປັນນິຄົມອຸດສາຫະກຳເພື່ອໃຫ້ມີສິ່ງອຳນວຍຄວາມສະດວກຄົບຊຸດ ເປັນຕົ້ນ ປັບໜ້າດິນໃຫ້ຮາບພຽງ, ສ້າງຖະໜົນພາຍໃນນິຄົມອຸດສາຫະກຳ ແລະ ເຊື່ອມຈອດກັບພາຍນອກ, ຕິດຕັ້ງລະບົບໄຟຟ້າ, ນ້ຳປະປາ, ໂທລະຄົມມະນາຄົມສື່ສານ;
5. **ຜູ້ລົງທຶນ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ຈົດທະບຽນວິສາຫະກິດ ເພື່ອດຳເນີນທຸລະກິດການຜະລິດ, ການຄ້າ ແລະ ການບໍລິການ ໃນນິຄົມອຸດສາຫະກຳ ຢ່າງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ.
6. **ຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ** ໝາຍເຖິງ ອົງການຈັດຕັ້ງຂອງລັດ ພາຍໃຕ້ການຊີ້ນຳ ແລະ ຄຸ້ມຄອງຂອງກະຊວງອຸດສາຫະກຳ ແລະ ການຄ້າ, ເປັນຫ້ອງການສ້າງຕັ້ງຂຶ້ນໃນນິຄົມອຸດສາຫະກຳ ທີ່ຕາງໜ້າໃຫ້ລັດຖະບານໃນການຄຸ້ມຄອງບໍລິຫານ ແລະ ບໍລິການອຳນວຍຄວາມສະດວກ ແກ່ການລົງທຶນ.
7. **ສະພາບໍລິຫານເສດຖະກິດນິຄົມອຸດສາຫະກຳ** ໝາຍເຖິງ ຄະນະກຳມະການທີ່ບໍ່ປະຈຳການ ໂດຍມີຜູ້ຕາງໜ້າຈາກທັງພາກລັດ ແລະ ຜູ້ພັດທະນາ ປະກອບເປັນຄະນະເພື່ອຄຸ້ມຄອງການພັດທະນາ ແລະ ຊຸກຍູ້ສົ່ງເສີມການລົງທຶນຢູ່ໃນນິຄົມອຸດສາຫະກຳ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບການສ້າງຕັ້ງ ແລະ ການພັດທະນານິຄົມອຸດສາຫະກຳ ໃນຂອບເຂດທົ່ວປະເທດ.

## ພາກທີ II
## ການສ້າງຕັ້ງ, ການພັດທະນານິຄົມອຸດສາຫະກຳ ແລະ ເຂດອຸດສາຫະກຳ
### ໝວດທີ 1
### ການສ້າງຕັ້ງ ແລະ ການພັດທະນານິຄົມອຸດສາຫະກຳ

**ມາດຕາ 5 ປະເພດນິຄົມອຸດສາຫະກຳ**

ນິຄົມອຸດສາຫະກຳ ປະກອບມີ 2 ປະເພດ ຄື:

1. ນິຄົມອຸດສາຫະກຳທົ່ວໄປ;
2. ນິຄົມອຸດສາຫະກຳປຸງແຕ່ງເພື່ອການສົ່ງອອກ.

**ມາດຕາ 6 ຮູບແບບການພັດທະນາ**

ການພັດທະນານິຄົມອຸດສາຫະກໍາ ປະກອບມີ 4 ຮູບແບບ ຄື:

1. ການພັດທະນາໂດຍລັດຖະບານຮ້ອຍສ່ວນຮ້ອຍ;
2. ການພັດທະນາຮ່ວມລະຫວ່າງລັດກັບລັດ;
3. ການພັດທະນາຮ່ວມລະຫວ່າງລັດກັບເອກະຊົນ;
4. ການພັດທະນາໂດຍເອກະຊົນຮ້ອຍສ່ວນຮ້ອຍ.

**ມາດຕາ 7 ການພັດທະນາ ໂດຍລັດຖະບານຮ້ອຍສ່ວນຮ້ອຍ**

ການພັດທະນາໂດຍລັດຖະບານຮ້ອຍສ່ວນຮ້ອຍ ແມ່ນລັດຖະບານເປັນຜູ້ສະໜອງທຶນທັງໝົດ ໃນການພັດທະນານິຄົມອຸດສາຫະກໍາ ແລະ ຄຸ້ມຄອງບໍລິຫານໂດຍການຈັດຕັ້ງລັດ ຕາມກົນໄກການສ້າງຕັ້ງ ແລະ ການພັດທະນານິຄົມອຸດສາຫະກໍາ ທີ່ກໍານົດໃນຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 8 ການພັດທະນາຮ່ວມລະຫວ່າງລັດກັບລັດ**

ການພັດທະນາຮ່ວມລະຫວ່າງລັດກັບລັດ ແມ່ນການລົງທຶນຮ່ວມກັນລະຫວ່າງລັດຖະບານລາວ ກັບລັດຖະບານຕ່າງປະເທດ ເພື່ອພັດທະນານິຄົມອຸດສາຫະກໍາ ໂດຍກໍານົດສິດ ແລະ ພັນທະຂອງແຕ່ລະຝ່າຍ ໃນສັນຍາການຮ່ວມມື.

**ມາດຕາ 9 ການພັດທະນາຮ່ວມລະຫວ່າງລັດກັບເອກະຊົນ**

ການພັດທະນາຮ່ວມລະຫວ່າງລັດກັບເອກະຊົນ ແມ່ນການລົງທຶນຮ່ວມກັນລະຫວ່າງລັດຖະບານລາວ ກັບຜູ້ລົງທຶນພາຍໃນ ຫຼື ຕ່າງປະເທດ ເພື່ອພັດທະນານິຄົມອຸດສາຫະກໍາ ໂດຍກໍານົດສິດ ແລະ ພັນທະຂອງແຕ່ລະຝ່າຍ ໃນສັນຍາການຮ່ວມມື.

**ມາດຕາ 10 ການພັດທະນາໂດຍເອກະຊົນຮ້ອຍສ່ວນຮ້ອຍ**

ການພັດທະນາໂດຍເອກະຊົນຮ້ອຍສ່ວນຮ້ອຍ ແມ່ນການລົງທຶນເພື່ອພັດທະນານິຄົມອຸດສາຫະກໍາ ຂອງເອກະຊົນພາຍໃນ ຫຼື ເອກະຊົນຕ່າງປະເທດ ຫຼື ການຮ່ວມທຶນລະຫວ່າງເອກະຊົນພາຍໃນກັບຕ່າງປະເທດ ຊຶ່ງບໍ່ມີການລົງທຶນຮ່ວມຂອງລັດຖະບານ.

**ມາດຕາ 11 ການສ້າງຕັ້ງນິຄົມອຸດສາຫະກໍາ**

ການສ້າງຕັ້ງນິຄົມອຸດສາຫະກໍາ ສາມາດສ້າງຕັ້ງ ຢູ່ໃນ ຫຼື ນອກເຂດອຸດສາຫະກໍາ ໂດຍສອດຄ່ອງກັບແຜນພັດທະນາຂອງຂະແໜງການອຸດສາຫະກໍາ ແລະ ການຄ້າ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນໃນແຕ່ລະໄລຍະ.

ຜູ້ມີຈຸດປະສົງຢາກສ້າງຕັ້ງ ແລະ ພັດທະນານິຄົມອຸດສາຫະກໍາ ໃຫ້ປະຕິບັດດັ່ງນີ້:

1. ໃນກໍລະນີຕ້ອງການສໍາປະທານທີ່ດິນລັດ ໃຫ້ນໍາສະເໜີຕໍ່ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕາມເງື່ອນໄຂ ແລະ ຂັ້ນຕອນ ທີ່ກໍານົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ. ພາຍຫຼັງສໍາເລັດຂັ້ນຕອນການສໍາປະທານແລ້ວ ຈຶ່ງສະເໜີຕໍ່ກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອອອກຂໍ້ຕົກລົງສ້າງຕັ້ງນິຄົມອຸດສາຫະກໍາ ແລະ ສ້າງຕັ້ງການຈັດຕັ້ງຄຸ້ມຄອງ ຕາມກົນໄກການຄຸ້ມຄອງນິຄົມອຸດສາຫະກໍາ.

2. ກໍລະນີບໍ່ມີການສໍາປະທານທີ່ດິນລັດ ໃຫ້ສະເໜີຕໍ່ກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອຄົ້ນຄ້ວາພິຈາລະນາ ຕາມເງື່ອນໄຂ ແລະ ຂັ້ນຕອນທີ່ກໍານົດໃນຂໍ້ຕົກລົງສະບັບນີ້ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

**ມາດຕາ 12 ເງື່ອນໄຂການສ້າງຕັ້ງ ແລະ ພັດທະນານິຄົມອຸດສາຫະກຳ**

ນິຕິບຸກຄົນ ແລະ ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ສາມາດລົງທຶນສ້າງຕັ້ງ ແລະ ພັດທະນານິຄົມອຸດສາຫະກຳໄດ້ ຕາມປະເພດ, ຮູບແບບ ແລະ ຕາມເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ມີເນື້ອທີ່ດິນຢ່າງຕ່ຳ 30 ເຮັກຕາ ຂຶ້ນໄປ ໂດຍມີເອກະສານສິດນຳໃຊ້ທີ່ດິນເປັນຂອງຕົນເອງ ຫຼື ເອກະສານອະນຸຍາດເຊົ່າ, ສຳປະທານ ຫຼື ສິດນຳໃຊ້ທີ່ດິນລັດ, ທີ່ຕັ້ງຢູ່ໃນ ຫຼື ນອກເຂດອຸດສາຫະກຳ ໂດຍສອດຄ່ອງກັບແຜນພັດທະນາຂອງຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ ໃນແຕ່ລະໄລຍະ;
2. ຜູ້ພັດທະນາ ຕ້ອງມີຖານະການເງິນທີ່ເຂັ້ມແຂງ ທີ່ມີແຫຼ່ງທຶນຢ່າງຕ່ຳ 25 ຕື້ກີບ ຂຶ້ນໄປ ໂດຍໄດ້ຮັບການກວດກາ ແລະ ຢັ້ງຢືນຈາກສະຖາບັນການເງິນ ພາຍໃນ ຫຼື ຕ່າງປະເທດ ເພື່ອນຳໃຊ້ໃນການພັດທະນາພື້ນຖານໂຄງລ່າງ;
3. ມີວັດຖຸປະສົງຈະແຈ້ງ ແລະ ກຳນົດອາຍຸການພັດທະນາ ທີ່ຊັດເຈນ ເໝາະສົມ ຕາມແຕ່ລະຂະໜາດຂອງນິຄົມອຸດສາຫະກຳ;
4. ມີລະບົບບຳບັດນ້ຳເສຍ, ມາດຕະການກຳຈັດສິ່ງເສດເຫຼືອ ແລະ ມາດຕະການດ້ານສິ່ງແວດລ້ອມທີ່ໄດ້ມາດຖານຕະສາກົນ.

**ມາດຕາ 13 ເອກະສານປະກອບ**

ເອກະສານປະກອບໃນການສະເໜີຂໍສ້າງຕັ້ງ ແລະ ພັດທະນານິຄົມອຸດສາຫະກຳ ຫາກະຊວງອຸດສາຫະກຳ ແລະ ການຄ້າ ມີດັ່ງນີ້:

1. ໃບຄຳຮ້ອງຂໍສ້າງຕັ້ງ ແລະ ພັດທະນານິຄົມອຸດສາຫະກຳ ຕາມແບບພິມທີ່ກະຊວງອຸດສາຫະກຳ ແລະ ການຄ້າ ກຳນົດ;
2. ສຳເນົາໃບທະບຽນວິສາຫະກິດ;
3. ແຜນພັດທະນານິຄົມອຸດສາຫະກຳ ແລະ ບົດວິພາກເສດຖະກິດ-ເຕັກນິກ;
4. ແຜນຜັງທີ່ຕັ້ງທີ່ດິນທີ່ສະເໜີສ້າງຕັ້ງ ແລະ ພັດທະນານິຄົມອຸດສາຫະກຳ;
5. ເອກະສານສິດນຳໃຊ້ທີ່ດິນ ຫຼື ເອກະສານອະນຸຍາດເຊົ່າ, ສຳປະທານ ຫຼື ສິດນຳໃຊ້ທີ່ດິນລັດ;
6. ບົດປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ.

**ມາດຕາ 14 ການພິຈາລະນາຕໍ່ການສະເໜີສ້າງຕັ້ງນິຄົມອຸດສາຫະກຳ**

ກົມອຸດສາຫະກຳ ແລະ ຫັດຖະກຳ ເປັນເຈົ້າການຄົ້ນຄ້ວາການສະເໜີສ້າງຕັ້ງນິຄົມອຸດສາຫະກຳ ໂດຍປະສານສົມທົບກັບພາກສ່ວນກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນຂອງແຂວງ, ນະຄອນຫຼວງ ເພື່ອນຳສະເໜີລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ພິຈາລະນາອອກຂໍ້ຕົກລົງສ້າງຕັ້ງນິຄົມອຸດສາຫະກຳ.

**ມາດຕາ 15 ການຄຸ້ມຄອງ ແລະ ການບໍລິການການລົງທຶນໃນນິຄົມອຸດສາຫະກຳ**

ການຄຸ້ມຄອງ ແລະ ການບໍລິການການລົງທຶນໃນນິຄົມອຸດສາຫະກຳ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ, ຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. ກະຊວງອຸດສາຫະກຳ ແລະ ການຄ້າ ພິຈາລະນາສ້າງຕັ້ງຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳຂຶ້ນ ຕາມຄວາມເໝາະສົມ ແລະ ຄວາມຈຳເປັນ ເພື່ອຕາງໜ້າໃຫ້ລັດຖະບານໃນການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ.

ຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ ມີກາປະທັບເປັນຂອງຕົນເອງ, ມີໜ່ວຍງານບໍລິການປະຕູດຽວ ເພື່ອໃຫ້ບໍລິການ ເປັນຕົ້ນ ການອອກໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ, ໃບອະນຸຍາດປຸກສ້າງ, ໃບອະນຸຍາດດຳເນີນກິດຈະການໂຮງງານ ແລະ ໃບຢັ້ງຢືນການນຳເຂົ້າ-ສົ່ງອອກ.

**ມາດຕາ 16 ສິດ ແລະ ພັນທະຂອງຜູ້ພັດທະນາ**

ຜູ້ພັດທະນານິຄົມອຸດສາຫະກຳ ມີສິດ ແລະ ພັນທະດັ່ງນີ້:

1. ໄດ້ຮັບການປົກປ້ອງການລົງທຶນ ແລະ ນະໂຍບາຍຕ່າງໆ ຕາມລະບຽບກົດໝາຍກຳນົດ;
2. ພັດທະນາພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກ ລວມທັງການຈັດສັນຕອນດິນ ໃນນິຄົມອຸດສາຫະກຳ ເພື່ອພັດທະນາໄປຕາມແຜນການທີ່ກຳນົດໄວ້ ຫຼື ບົດວິພາກເສດຖະກິດ ເຕັກນິກ ທີ່ໄດ້ຮັບຮອງໂດຍສະພາບໍລິຫານເສດຖະກິດນິຄົມອຸດສາຫະກຳ;
3. ນຳທຶນເຂົ້າມາພັດທະນານິຄົມອຸດສາຫະກຳ ຕາມຈຳນວນ ແລະ ໄລຍະເວລາທີ່ໄດ້ກຳນົດໄວ້;
4. ຄຸ້ມຄອງບໍລິຫານທຸລະກິດ, ໂຄສະນາ ແລະ ດຶງດູດການລົງທຶນເຂົ້າໃນນິຄົມອຸດສາຫະກຳ;
5. ສ້າງເງື່ອນໄຂ ຫຼື ກົນໄກໃນການຍົກລະດັບສີມືແຮງງານລາວ ໂດຍສະເພາະແຮງງານໃນຂອບເຂດພື້ນທີ່ເຂດໃກ້ຄຽງເພື່ອໃຫ້ສາມາດເຂົ້າເຮັດວຽກໃນນິຄົມອຸດສາຫະກຳ;
6. ເອົາໃຈໃສ່ພັດທະນາສີມືແຮງງານ ໃຫ້ແກ່ຜູ້ລົງທຶນໃນນິຄົມອຸດສາຫະກຳ ຕາມແຜນຄວາມຕ້ອງການ ແລະ ຄວາມເໝາະສົມແຕ່ລະໄລຍະ;
7. ມີສ່ວນຮ່ວມ ຫຼື ປະກອບສ່ວນໃນການພັດທະນາຊຸມຊົນເຂດບ້ານໃກ້ຄຽງກັບນິຄົມອຸດສາຫະກຳ ຕາມຄວາມສາມາດ ແລະ ຄວາມເໝາະສົມ;
8. ສ້າງເງື່ອນໄຂໃຫ້ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ໃຫ້ສາມາດສະໜອງການບໍລິການໃຫ້ແກ່ການລົງທຶນພາຍໃນນິຄົມອຸດສາຫະກຳ;
9. ມອບພັນທະພາສີ, ອາກອນ ແລະ ຄ່າທຳນຽມອື່ນໆ ຕາມກົດໝາຍ ແລະ ລະບຽບການກຳນົດ ໃຫ້ລັດຖະບານຄົບຖ້ວນ ແລະ ທັນຕາມກຳນົດເວລາ;
10. ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ລັດ ໃນການຄຸ້ມຄອງຕິດຕາມການລົງທຶນໃນນິຄົມອຸດສາຫະກຳ ແລະ ລາຍງານຜົນຄວາມຄືບໜ້າໃນການພັດທະນາ ໃຫ້ຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳຊາບ ປະຈຳໄຕມາດ, ປະຈຳ 6 ເດືອນ ແລະ ປະຈຳປີ;
11. ປະຕິບັດວຽກອື່ນ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ.

**ມາດຕາ 17 ສິດ ແລະ ພັນທະຂອງຜູ້ລົງທຶນ**

ຜູ້ລົງທຶນໃນນິຄົມອຸດສາຫະກຳ ມີສິດ ແລະ ພັນທະດັ່ງນີ້:

1. ໄດ້ຮັບການປົກປ້ອງການລົງທຶນ ແລະ ນະໂຍບາຍຕ່າງໆ ຕາມກົດໝາຍ ແລະ ລະບຽບການ;
2. ຄຸ້ມຄອງບໍລິຫານ ແລະ ດຳເນີນທຸລະກິດ ຕາມແຜນທຸລະກິດທີ່ກຳນົດ ຫຼື ບົດວິພາກເສດຖະກິດເຕັກນິກທີ່ໄດ້ຮັບຮອງ;
3. ນຳທຶນເຂົ້າມາລົງທຶນ ຕາມຈຳນວນ ແລະ ໄລຍະເວລາທີ່ໄດ້ກຳນົດໄວ້;
4. ໂອນເງິນທີ່ໄດ້ຮັບຈາກການດຳເນີນທຸລະກິດອອກນອກປະເທດ ໂດຍສອດຄ່ອງຕາມຂັ້ນຕອນຂອງກົດໝາຍ ແລະ ລະບຽບການກຳນົດ;
5. ສ້າງເງື່ອນໄຂ ຫຼື ກົນໄກໃນການຍົກລະດັບສີມືແຮງງານລາວ ໂດຍສະເພາະແຮງງານໃນພື້ນທີ່ຂອບເຂດໃກ້ຄຽງໃຫ້ສາມາດເຂົ້າເຮັດວຽກໃນໂຮງງານຂອງຕົນເອງໄດ້;

6. ວາງແຜນການ ແລະ ເອົາໃຈໃສ່ພັດທະນາສີມືແຮງງານ ຕາມແຜນຄວາມຕ້ອງການ ແລະ ຄວາມເໝາະສົມແຕ່ລະໄລຍະ;
7. ປະຕິບັດພັນທະຕ່າງໆ ໂດຍສະເພາະ ພັນທະດ້ານພາສີ, ອາກອນ ແລະ ຄ່າທຳນຽມອື່ນໆ ຕາມກົດໝາຍ ແລະ ລະບຽບການກຳນົດ ໃຫ້ຄົບຖ້ວນ ແລະ ທັນຕາມກຳນົດເວລາ;
8. ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ລັດ ແລະ ຜູ້ພັດທະນາ ໃນການຄຸ້ມຄອງຕິດຕາມການລົງທຶນໃນນິຄົມອຸດສາຫະກຳ ແລະ ລາຍງານຜົນຄວາມຄືບໜ້າໃນການລົງທຶນ ໃຫ້ຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ ຊາບໃນແຕ່ລະໄລຍະ;
9. ປະຕິບັດວຽກອື່ນ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການກຳນົດ.

## ໝວດທີ 2
## ການກຳນົດ ແລະ ການພັດທະນາເຂດອຸດສາຫະກຳ

### ມາດຕາ 18 ການກຳນົດ ແລະ ການພັດທະນາເຂດອຸດສາຫະກຳ

ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ເປັນເຈົ້າການ ໂດຍປະສານສົມທົບກັບພະແນກການກ່ຽວຂ້ອງ ແລະ ອົງການປົກຄອງແຂວງ, ນະຄອນຫຼວງ ສຶກສາ, ຄັດເລືອກ, ກຳນົດຂອບເຂດດິນທີ່ເໝາະສົມ ແລະ ປັກຫຼັກໝາຍຈຸດທີ່ຕັ້ງຂອບເຂດບໍລິເວນຂອງເຂດ ແລ້ວສະເໜີຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ອອກຂໍ້ຕົກລົງຮັບຮອງເປັນເຂດອຸດສາຫະກຳ ຂອງແຂວງ, ນະຄອນຫຼວງ ແລ້ວນຳສະເໜີກະຊວງອຸດສາຫະກຳ ແລະ ການຄ້າ ສະເໜີຕໍ່ລັດຖະບານຮັບຮອງເປັນທີ່ດິນເຂດອຸດສາຫະກຳ.

ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ເປັນເຈົ້າການໃນການສ້າງແຜນແມ່ບົດພັດທະນາເຂດອຸດສາຫະກຳ, ຂຶ້ນແຜນການຊົດເຊີຍ-ເວນຄືນ ຂອບເຂດພື້ນທີ່ກຳນົດ ເພື່ອພັດທະນາດ້ານພື້ນຖານໂຄງລ່າງທີ່ຈຳເປັນ ເພື່ອຮອງຮັບການລົງທຶນສ້າງຕັ້ງໂຮງງານ ແລະ ກິດຈະການສະໜັບສະໜູນອື່ນໆ ທີ່ຮັບໃຊ້ໃຫ້ແກ່ການດຳເນີນກິດຈະການອຸດສາຫະກຳປຸງແຕ່ງ.

### ມາດຕາ 19 ການລົງທຶນໃນເຂດອຸດສາຫະກຳ

ການລົງທຶນໃນເຂດອຸດສາຫະກຳ ໃຫ້ປະຕິບັດຕາມຂັ້ນຕອນຄືກັນກັບການລົງທຶນຢູ່ເຂດທົ່ວໄປ ຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ພາຍໃຕ້ການຄຸ້ມຄອງຂອງຂະແໜງອຸດສາຫະກຳ ແລະ ການຄ້າ.

ການລົງທຶນໃນເຂດອຸດສາຫະກຳ ໄດ້ຮັບນະໂຍບາຍຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງ ຂອງ ສປປ ລາວ.

# ພາກທີ III
# ນະໂຍບາຍສົ່ງເສີມການພັດທະນາ ແລະ ການລົງທຶນ

### ມາດຕາ 20 ນະໂຍບາຍຕໍ່ຜູ້ພັດທະນານິຄົມອຸດສາຫະກຳ

ລັດຖະບານມີນະໂຍບາຍເປີດກ້ວາງ ແລະ ຊຸກຍູ້ສົ່ງເສີມໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນສ້າງ ແລະ ພັດທະນານິຄົມອຸດສາຫະກຳ ຕາມປະເພດທີ່ກຳນົດໄວ້ ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ ເພື່ອສ້າງເງື່ອນໄຂສະດວກໃນການດຳເນີນທຸລະກິດດ້ານອຸດສາຫະກຳປຸງແຕ່ງ ແລະ ກິດຈະການສະໜັບສະໜູນ.

ຜູ້ພັດທະນານິຄົມອຸດສາຫະກຳ ໄດ້ຮັບນະໂຍບາຍຍົກເວັ້ນພາສີອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ຕາມທີ່ກຳນົດໃນສັນຍາຮ່ວມມື ລະຫວ່າງລັດຖະບານ ແຫ່ງ ສປປ ລາວ ກັບຜູ້ພັດທະນາ ແລະ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 21 ນະໂຍບາຍຕໍ່ການລົງທຶນໃນນິຄົມອຸດສາຫະກຳ**

ການລົງທຶນໃນນິຄົມອຸດສາຫະກຳ ໄດ້ຮັບການອຳນວຍຄວາມສະດວກ ແລະ ໄດ້ຮັບນະໂຍບາຍສະເພາະຕາມປະເພດຂອງການລົງທຶນ ທີ່ໄດ້ກຳນົດຢູ່ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ ໃນການຍົກເວັ້ນພາສີອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ຕາມທີ່ກຳນົດໃນສັນຍາພັດທະນານິຄົມອຸດສາຫະກຳດັ່ງກ່າວ ແລະ ຕາມທີ່ກຳນົດໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ຜູ້ລົງທຶນໃນນິຄົມອຸດສາຫະກຳ ມີສິດຮັບຮູ້ຂໍ້ມູນຂ່າວສານ ກ່ຽວກັບນະໂຍບາຍ ແລະ ລະບຽບການຄຸ້ມຄອງນິຄົມອຸດສາຫະກຳ ຢ່າງເປີດເຜີຍ ຊຶ່ງແຕ່ລະນິຄົມອຸດສາຫະກຳ ຕ້ອງມີລະບຽບການສະເພາະ ໃນການຄຸ້ມຄອງບໍລິຫານ ໂດຍແທດເໝາະກັບສະພາບເງື່ອນໄຂຈຸດພິເສດຂອງແຕ່ລະນິຄົມອຸດສາຫະກຳ.

**ມາດຕາ 22 ການຂໍອະນຸຍາດລົງທຶນ ແລະ ການນຳໃຊ້ດິນ ໃນນິຄົມອຸດສາຫະກຳ**

ການຂໍອະນຸຍາດລົງທຶນໃນນິຄົມອຸດສາຫະກຳ ສາມາດປະກອບເອກະສານ ສະເໜີຕໍ່ຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ ໂດຍປະກອບເອກະສານຕາມແບບພິມ ທີ່ໄດ້ກຳນົດ.

ຜູ້ພັດທະນາເປັນຜູ້ຈັດສັນເນື້ອທີ່ດິນໃນນິຄົມອຸດສາຫະກຳ ໂດຍແບ່ງອອກເປັນຕອນ ແລະ ສະເໜີຕໍ່ຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ ອອກໃບຢັ້ງຢືນສິດນຳໃຊ້ທີ່ດິນ ເປັນແຕ່ລະຕອນ ເພື່ອໃຫ້ຜູ້ລົງທຶນເຊົ່າ ຫຼື ຊື້ ສິດນຳໃຊ້ດັ່ງກ່າວ ຕາມກຳນົດເວລາ ທີ່ກຳນົດໃນສັນຍາພັດທະນານິຄົມອຸດສາຫະກຳດັ່ງກ່າວ.

## ພາກທີ IV
## ການຄຸ້ມຄອງນິຄົມອຸດສາຫະກຳ

**ມາດຕາ 23 ການຄຸ້ມຄອງນິຄົມອຸດສາຫະກຳ**

ມອບໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ ເປັນເຈົ້າການປະສານສົມທົບກັບ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ຄຸ້ມຄອງການສ້າງຕັ້ງ ແລະ ການພັດທະນານິຄົມອຸດສາຫະກຳ ໃນຂອບເຂດທົ່ວປະເທດ.

ອົງການຄຸ້ມຄອງນິຄົມອຸດສາຫະກຳ ປະກອບມີ ດັ່ງນີ້:

1. ກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ.
2. ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ.
3. ຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ.

**ມາດຕາ 24 ສິດ ແລະ ໜ້າທີ່ຂອງກົມອຸດສາຫະກຳ ແລະ ຫັດຖະກຳ**

ກົມອຸດສາຫະກຳ ແລະ ຫັດຖະກຳ ມີສິດ ແລະ ໜ້າທີ່ ໃນການຄຸ້ມຄອງການສ້າງຕັ້ງ ແລະ ການພັດທະນານິຄົມອຸດສາຫະກຳ ດັ່ງນີ້:

1. ກຳນົດ ຫຼັກການ ແລະ ນະໂຍບາຍລວມ ໃນການຄຸ້ມຄອງ ແລະ ສົ່ງເສີມການພັດທະນານິຄົມອຸດສາຫະກຳໃນຂອບເຂດທົ່ວປະເທດ;
2. ສ້າງຄູ່ມືດ້ານເຕັກນິກລວມ ກ່ຽວກັບການຈັດສັນພື້ນທີ່, ການອອກແບບ ຫຼື ວາງລະບົບລວມ ຂອງນິຄົມອຸດສາຫະກຳ;

3. ຄົ້ນຄວ້າ ແລະ ກຳນົດນະໂຍບາຍໃນການພັດທະນາລະບົບພື້ນຖານໂຄງລ່າງຕ່າງໆ ລວມທັງສົ່ງເສີມການລົງທຶນໃສ່ນິຄົມອຸດສາຫະກຳ;
4. ຄົ້ນຄວ້າສ້າງຮ່າງນະໂຍບາຍ ແລະ ລະບົບຄຸ້ມຄອງບໍລິຫານ, ຊຸກຍູ້ສົ່ງເສີມນິຄົມອຸດສາຫະກຳ ໂດຍປະສານສົມທົບກັບຜູ້ພັດທະນາ ເພື່ອກຳນົດໃຫ້ສອດຄ່ອງກັບສະພາບຕົວຈິງແຕ່ລະໄລຍະເພື່ອນຳສະເໜີຂັ້ນເທິງຮັບຮອງ;
5. ຄົ້ນຄວ້າ ແລະ ສະເໜີຂໍອະນຸມັດແຕ່ງຕັ້ງບຸກຄະລະກອນຂອງພາກລັດ ເພື່ອປະກອບເຂົ້າໃນຄະນະຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ ທີ່ສອດຄ່ອງ ແລະ ເໝາະສົມ ຕາມແຕ່ລະຮູບແບບຂອງການພັດທະນາ;
6. ໃຫ້ຄຳປຶກສາ, ແນະນຳ, ຍົກລະດັບ ແລະ ໃຫ້ການຝຶກອົບຮົມດ້ານວິຊາການ ໃຫ້ຂັ້ນທ້ອງຖິ່ນ ແລະ ຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງນິຄົມອຸດສາຫະກຳ;
7. ປະເມີນຄວາມເປັນໄປໄດ້ ທາງດ້ານເສດຖະກິດ-ເຕັກນິກ ໃນການພັດທະນານິຄົມອຸດສາຫະກຳ ຕາມການສະເໜີຂອງຜູ້ພັດທະນາ, ການເຈລະຈາ ແລະ ສ້າງຮ່າງສັນຍາຮ່ວມທຶນ;
8. ຮັບຮອງແຜນພັດທະນານິຄົມອຸດສາຫະກຳ ແລະ ຕິດຕາມ ກວດກາການພັດທະນາ;
9. ປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ, ພາກສ່ວນກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ກຳນົດຈັດສັນເນື້ອທີ່ດິນທີ່ເໝາະສົມໃນການສ້າງຕັ້ງ ແລະ ພັດທະນາ ນິຄົມອຸດສາຫະກຳ;
10. ໂຄສະນາເຜີຍແຜ່ຂໍ້ມູນ ແລະ ລະດົມຂົນຂວາຍ ຊ່ວຍຜູ້ພັດທະນາໃນການດຶງດູດເອົາການລົງທຶນທັງພາຍໃນ ແລະ ຕ່າງປະເທດ ເຂົ້າໃນນິຄົມອຸດສາຫະກຳ;
11. ຄົ້ນຄວ້າ ຊອກຫາແຫຼ່ງທຶນ ເພື່ອພັດທະນາໂຄງລ່າງພື້ນຖານເຊື່ອມຕໍ່ກັບນິຄົມອຸດສາຫະກຳ;
12. ປະສານສົມທົບກັບຂະແໜງການກ່ຽວຂ້ອງ ແລະ ອົງການຈັດຕັ້ງສາກົນ ໃນວຽກງານສົ່ງເສີມ ແລະ ຄຸ້ມຄອງນິຄົມອຸດສາຫະກຳ ໃຫ້ມີປະສິດທິຜົນ;
13. ປະຕິບັດສິດອື່ນໆ ຕາມການມອບໝາຍຂອງຂັ້ນເທິງ ກ່ຽວກັບວຽກງານນິຄົມອຸດສາຫະກຳ.

**ມາດຕາ 25 ສິດ ແລະ ໜ້າທີ່ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ**

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ໃນການຄຸ້ມຄອງ, ການສ້າງຕັ້ງ ແລະ ການພັດທະນານິຄົມອຸດສາຫະກຳ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍວຽກງານການສົ່ງເສີມ ແລະ ຄຸ້ມຄອງການພັດທະນານິຄົມອຸດສາຫະກຳ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ການມອບໝາຍຂອງກະຊວງ;
2. ຄົ້ນຄວ້າ ແລະ ປະກອບບຸກຄະລະກອນຂອງຕົນ ຫຼື ພິຈາລະນາພະນັກງານຂັ້ນເມືອງ ເຂົ້າໃນຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ ບົນພື້ນຖານການມອບໝາຍ ແລະ ຄວາມເປັນເອກະພາບນຳກະຊວງອຸດສາຫະກຳ ແລະ ການຄ້າ;
3. ຄົ້ນຄວ້າ ແລະ ພິຈາລະນາໃນການອະນຸມັດເອກະສານຂໍລົງທຶນ, ສ້າງຕັ້ງ ແລະ ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງ ໃນນິຄົມອຸດສາຫະກຳ ຕາມພາລະບົດບາດ ແລະ ຕາມການແບ່ງຂັ້ນຄຸ້ມຄອງສະເພາະເຂດທີ່ບໍ່ທັນມີຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ;
4. ຊຸກຍູ້, ຕິດຕາມ ແລະ ກວດກາການພັດທະນາ, ການດຳເນີນງານຂອງນິຄົມອຸດສາຫະກຳ ແລະ ການດຳເນີນກິດຈະການຂອງໂຮງງານທີ່ຕັ້ງຢູ່ໃນນິຄົມອຸດສາຫະກຳ ເພື່ອໃຫ້ດຳເນີນຖືກຕ້ອງຕາມແຜນການທີ່ໄດ້

ອະນຸຍາດ ແລະ ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ, ການປົກປັກຮັກສາສິ່ງແວດລ້ອມ ແລະ ການພັດທະນາແບບຍືນຍົງ;

5. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ທັງສາຍຕັ້ງ ແລະ ສາຍຂວາງ ເພື່ອຈັດຕັ້ງປະຕິບັດວຽກງານສົ່ງເສີມ ແລະ ຄຸ້ມຄອງນິຄົມອຸດສາຫະກໍາ ໃຫ້ມີປະສິດທິຜົນ;
6. ລາຍງານສະພາບການພັດທະນານິຄົມອຸດສາຫະກໍາ ໃຫ້ກະຊວງອຸດສາຫະກໍາ ແລະ ການຄ້າ ຊາບເປັນແຕ່ລະໄລຍະ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງກະຊວງອຸດສາຫະກໍາ ແລະ ການຄ້າ ທີ່ກ່ຽວຂ້ອງກັບວຽກງານນິຄົມອຸດສາຫະກໍາ.

**ມາດຕາ 26 ສິດ ແລະ ໜ້າທີ່ຂອງຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກໍາ**

ຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກໍາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໃຫ້ບໍລິການປະຕູດຽວ ຊຸກຍູ້ຊ່ວຍເຫຼືອ ແກ່ຜູ້ພັດທະນາ ແລະ ຜູ້ລົງທຶນ ເພື່ອໃຫ້ມີຄວາມສະດວກໃນການດໍາເນີນທຸລະກິດ;
2. ພິຈາລະນາອະນຸຍາດຕ່າງໆ ຕາມການຕົກລົງມອບໝາຍຂອງກະຊວງອຸດສາຫະກໍາ ແລະ ການຄ້າ ເປັນຕົ້ນການຂຶ້ນທະບຽນວິສາຫະກິດ, ການອະນຸຍາດດໍາເນີນທຸລະກິດ ແລະ ການດໍາເນີນກິດຈະການໂຮງງານ;
3. ຄຸ້ມຄອງ, ຕິດຕາມການນໍາເຂົ້າເຄື່ອງຈັກ, ວັດຖຸດິບ ແລະ ວັດຖຸ-ອຸປະກອນ ແລະ ການສົ່ງອອກສິນຄ້າ;
4. ເກັບຄ່າທໍານຽມ ແລະ ຄ່າບໍລິການເອກະສານ ຕາມກົດໝາຍລະບຽບການກໍານົດ ເພື່ອມອບໃຫ້ລັດຢ່າງຄົບຖ້ວນ;
5. ຕິດຕາມການເກັບ ແລະ ການມອບພັນທະຕ່າງໆ ຂອງຜູ້ພັດທະນາ ແລະ ຜູ້ລົງທຶນ ໃຫ້ແກ່ລັດຖະບານຕາມລະບຽບການ ແລະ ເວລາທີ່ກໍານົດ;
6. ສະຫຼຸບ, ສັງລວມ ລາຍງານສະພາບການຈັດຕັ້ງປະຕິບັດວຽກງານ ເປັນແຕ່ລະໄລຍະ (ປະຈໍາໄຕມາດ, ປະຈໍາ 6 ເດືອນ ແລະ ປະຈໍາປີ);
7. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມການມອບໝາຍຂອງກະຊວງອຸດສາຫະກໍາ ແລະ ການຄ້າ ຫຼື ຂະແໜງການກ່ຽວຂ້ອງ.

## ພາກທີ V
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 27 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເຄື່ອນໄຫວດີເດັ່ນ ໃນວຽກງານນິຄົມອຸດສາຫະກໍາ ຕາມເນື້ອໃນທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ສົ່ງເສີມ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 28 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເຄື່ອນໄຫວລະເມີດຕໍ່ເນື້ອໃນຂອງຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ປະຕິບັດມາດຕະການທາງວິໄນ, ປັບໃໝທາງແພ່ງ ຫຼື ລົງໂທດທາງອາຍາຕາມແຕ່ລະກໍລະນີທີ່ກໍານົດໄວ້ໃນກົດໝາຍວ່າດ້ວຍອຸດສາຫະກໍາປຸງແຕ່ງ ແລະ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານ.

## ພາກທີ VI
## ບົດບັນຍັດສຸດທ້າຍ

**ມາດຕາ 29 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ ເປັນເຈົ້າການ ໂດຍປະສານສົມທົບກັບພະແນກອຸດສາຫະກຳ ແລະການຄ້າແຂວງ, ນະຄອນຫຼວງ, ອຳນາດການປົກຄອງທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 30 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນ ແລະ ພາຍຫຼັງ 15 ວັນ ນັບແຕ່ວັນທີ່ພິມລົງໃນຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

**ລັດຖະມົນຕີ**

ນ ເຂັມມະນີ ພົນເສນາ